# ລາຍລະອຽດໜ້າທີ່ຮັບຜິດຊອບ

## ວິຊາການປັບປຸງຊີວິດການເປັນຢູ່ຂັ້ນເມືອງ ວຽກງານປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນທາງດ້ານສະບຽງອາຫານ (ຄປພ) ກອງທຶນຫລຸດຜ່ອນຄວາມທຸກຍາກ

| | |
|---|---|
| ຊື່ໂຄງການ: | ໂຄງການປັບປຸງຊີວິດການເປັນຢູ່ເພື່ອຄໍ້າປະກັນດ້ານໂພສະນາການ (ຄປພ) |
| ຈຳນວນຕຳແໜ່ງ: | 03 |
| ຕຳແໜ່ງ: | ວິຊາການດ້ານປັບປຸງຊີວິດການເປັນຢູ່ ຂັ້ນເມືອງ |
| ລາຍງານໂດຍກົງຫາ: | ຜູ້ປະສານງານ ຂັ້ນເມືອງ ຂອງ ທີມງານ ຄປພ ແລະ ຫລຍ |
| ໜ້າທີ່ຮັບຜິດຊອບທົ່ວໄປ: | ໃຫ້ຄຳແນະນຳ ແລະ ນຳພາຜູ້ປະສານງານຂັ້ນບ້ານ ດ້ານປັບປຸງຊີວິດການເປັນຢູ່ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດບັນດາໂຄງການໃຫ້ສຳເລັດຕາມໄລຍະເວລາທີ່ກຳນົດໄວ້ ໃນກຸ່ມບ້ານ ແລະ ບ້ານ. |
| ບ່ອນປະຈຳການ: | ຫ້ອງການ ຫລຍ ເມືອງ ຊຽງຄໍ້, ເມືອງ ຊຳໃຕ້ ແຂວງ ຫົວພັນ, ເມືອງ ນອງ ແຂວງ ສະຫວັນນະເຂດ ແລະ ເດີນທາງໄປປະຕິບັດວຽກງານຢ່າງເປັນປົກກະຕິ ເພື່ອຊ່ວຍເຫລືອກຸ່ມຊ່ວຍເຫລືອເຊິ່ງກັນແລະກັນ ໃນບັນດາກຸ່ມບ້ານ ແລະ ບ້ານເປົ້າໝາຍ |
| ປະເພດສັນຍາ: | ເປັນລາຍປີ ໂດຍອີງຕາມຜົນການປະຕິບັດວຽກຕົວຈິງ ໃນແຕ່ລະໄລຍະ. ມີໄລຍະທົດສອບວຽກ 3-6 ເດືອນ ໃນເວລາເຂົ້າເຮັດວຽກໃໝ່ |

### ຈຸດປະສົງຫລັກຂອງຕຳແໜ່ງ:

ແມ່ນເພື່ອຮັບປະກັນບັນດາກິດຈະກຳຕ່າງໆຂອງໂຄງການໄດ້ຖືກປະຕິບັດ ຢ່າງຖືກຕ້ອງໃນຂັ້ນເມືອງ ຈົນຮອດຂັ້ນບ້ານໂດຍປະຕິບັດຕາມຄູ່ມືຈັດຕັ້ງປະຕິບັດຂອງໂຄງການ, ນຳພາ ແລະ ປະສານງານກັບທຸກພາກສ່ວນທີ່ກ່ຽວຂ້ອງກັບ ໂຄງການ LONG, ແນະນ□າ ແລະ ນ□າພາ ພະນັກງານ ຂອງໂຄງການ LONG ໃນຂັ້ນເມືອງ ແລະ ຂັ້ນບ້ານ ໃນເວລາລົງສະໜາມ.

### ໜ້າທີ່ ແລະ ຄວາມຮັບຜິດຊອບຫລັກ:

- ເຂົ້າຮ່ວມກອງປະຊຸມແນະນຳໂຄງການ ຄປພ ແລະ ກະກຽມແຜນການຈັດກອງປະຊຸມຢ່າງເປັນປົກກະຕິ
- ເຂົ້າຮ່ວມຫລັກສູດການຝຶກອົບຮົມໃນຫົວຂໍ້ກ່ຽວພັນກັບ ໂຄງການຢ່າງຫ້າວຫັນ, ແລະ ລວມທັງການປຸກລະດົມຊຸມຊົນ, ການເຂົ້າຮ່ວມໃນການວາງແຜນຈັດລຽງບູລິມະສິດ ແລະ ການຕິດຕາມລາຍງານຄວາມຄືບໜ້າຂອງໂຄງການ. ການຝຶກອົບຮົມຈະຖືກແບ່ງອອກເປັນ 3 ກຸ່ມໃນການຝຶກອົບຮົມກັບທີ່ ເຊັ່ນ 1 ແມ່ນ ກ່ອນການນຳໃຊ້ ແລະ ບໍລິການ, 2 ໃນໄລຍະການນຳໃຊ້ ແລະ ບໍລິການ, 3 ການແກ້ໄຂບັນຫາ ແລະ ການນຳໃຊ້. ໃນຊ່ວງໄລຍະນີ້ ຍັງຈະໄດ້ພົວພັນກັບບັນດາສະຖາບັນຄົ້ນຄວ້າດ້ານກະສິກຳອື່ນໆ.
- ເຮັດວຽກໃກ້ຊິດຕິດແທດກັບປະສານງານຂັ້ນບ້ານ ແລະ ປະສານງານຂັ້ນເມືອງ ຂອງ ໂຄງການ ຄປພ ໃນກິດຈະກຳວຽກງານປັບປຸງຊີວິດການເປັນຢູ່ຂອງໂຄງການ

- ຊ່ວຍເຫລືອໃນການກະກຽມແຜນພັດທະນາວຽກງານປັບປຸງຊີວິດການເປັນຢູ່ຕາມຄວາມຮຽກຮ້ອງຕ້ອງການ
- ປະຕິບັດວິທີການ ປະເມີນການມີຮ່ວມຂອງຊຸມຊົນ ເພື່ອເກັບກຳຂໍ້ມູນ ແລະ ຊ່ວຍເຫລືອຊາວບ້ານຈັດລຽງບູລິມະສິດຄວາມຕ້ອງການຂອງເຂົາເຈົ້າຕໍ່ກັບໂຄງການຍ່ອຍຂອງວຽກງານປັບປຸງຊີວິດການເປັນຢູ່ ແລະ ການເກັບຮັກສາບັນດາເອກະສານທີ່ກ່ຽວຂ້ອງ ແລະ ຖານຂໍ້ມູນຕ່າງໆ
- ຮັບຜິດຊອບໃນການຄຸ້ມຄອງບໍລິຫານທຶນຂອງບັນດາໂຄງການຍ່ອຍຂອງກິດຈະກຳປັບປຸງຊີວິດການເປັນຢູ່
- ຊ່ວຍຜູ້ປະສານງານຂັ້ນບ້ານເພື່ອຮັບປະກັນວ່າການຈັດຕັ້ງປະຕິບັດວຽກງານຂອງເຂົາເຈົ້າ ຈະຕ້ອງສຳເລັດໃຫ້ທັນກັບໄລຍະເວລາທີ່ກຳນົດໄວ້.
- ຊ່ວຍເຫລືອ ກຸ່ມຜູ້ຍິງ ແລະ ຊາວໜຸ່ມ ຢູ່ພາຍໃນບ້ານ ໃນການຈຳແນກ ແລະ ຈັດຕັ້ງປະຕິບັດບັນດາກິດຈະກຳ/ໂຄງການຍ່ອຍປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າ
- ຊ່ວຍເຫລືອຄະນະກຳມະການບ້ານ ແລະ ກຸ່ມຊ່ວຍເຫລືອເຊິ່ງກັນ ແລະ ກັນ ໃນຂັ້ນຕອນການຈັດຊື້ອຸປະກອນຂອງໂຄງການຍ່ອຍເພື່ອຮັບໃຊ້ພາຍຫລັງການສຳຫລວດ.
- ເກັບກຳຮວບຮວມປັດໃຈການຜະລິດຢ່າງເປັນລະບົບ ແລະ ບຳລຸງຮັກສາຖານຂໍ້ມູນກ່ຽວກັບແຫລ່ງຊັບພະຍາກອນດັ່ງກ່າວ
- ຊ່ວຍເຫລືອກຸ່ມຊ່ວຍເຫລືອເຊິ່ງກັນ ແລະ ກັນໃນການພັດທະນາຄຸນະພາບຂອງຜະລິດຕະພັນ ແລະ ການບໍລິການ.
- ຊ່ວຍເຫລືອກຸ່ມຊ່ວຍເຫລືອເຊິ່ງກັນ ແລະ ກັນໃນການນຳສະເໜີເຕັກນິກໃໝ່ໆຕາມການຮຽກຮ້ອງຕ້ອງການຂອງທີມງານ ຄປພ ຢູ່ຂັ້ນສູນກາງ.
- ຮວບຮວມຢ່າງເປັນລະບົບ ກ່ຽວກັບສິ່ງອຳນວຍຄວາມສະດວກໃນການຊອກຫາຕະຫລາດເພື່ອຈຳໜ່າຍສິນຄ້າໃນລະດັບຂັ້ນທ້ອງຖິ່ນ
- ຕິດຕາມຄວາມຄືບໜ້າຂອງ ບັນດາໂຄງການຍ່ອຍວຽກງານປັບປຸງຊີວິດການເປັນຢູ່ ທີ່ນຳໃຊ້ທຶນຂອງໂຄງການ ຄປພ
- ປະຕິບັດໜ້າທີ່ດ້ວຍຄວາມໂປ່ງໃສ ແລະ ຮັບຜິດຊອບໃນທຸກໆກິດຈະກຳທີ່ກ່ຽວຂ້ອງກັບວຽກງານປັບປຸງຊີວິດການເປັນຢູ່
- ຈັດຕັ້ງກອງປະຊຸມປະຈຳເດືອນເພື່ອຕັດສິນໃຈໃນບັນຫາທີ່ຈຳເປັນຈະຕ້ອງໄດ້ແກ້ໄຂ
- ຊ່ວຍເຫລືອຄະນະກຳມະການບ້ານ ແລະ ກຸ່ມຊ່ວຍເຫລືອເຊິ່ງກັນ ແລະ ກັນ ໃນການກະກຽມບົດສະເໜີໂຄງການຍ່ອຍ ເພື່ອຂໍອະນຸມັດ ແລະ ຈັດແບ່ງທຶນ ຈາກທີມງານ ຄປພ ຢູ່ຂັ້ນສູນກາງ
- ສ້າງສາຍພົວພັນໄລຍະຍາວກັບບັນດາບໍລິສັດຫ້າງຮ້ານຕ່າງໆ ໃນລະດັບຂັ້ນທ້ອງຖິ່ນ ເພື່ອຮັບປະກັນໃຫ້ມີຕະຫລາດຮອງຮັບຜະລິດຕະພັນຂອງໂຄງການ.
- ທົບທວນຄວາມຄືບໜ້າແຜນພັດທະນາຂອງວຽກງານປັບປຸງຊີວິດການເປັນຢູ່ຂອງບ້ານ
- ປະຕິບັດໜ້າວຽກອື່ນໆຕາມການຮຽກຮ້ອງຂອງໂຄງການ

## ຄຸນະວຸດທິ ແລະ ປະສົບການ:

- ຮຽນຈົບດ້ານກະສິກຳ ຫລື ພັດທະນາຊົນນະບົດ, ສັງຄົມວິທະຍາ, ເສດຖະກິດຊົນນະບົດ, ການສຶກສາດ້ານການພັດທະນາ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງ
- ປະສົບການຢ່າງໜ້ອຍ 03 ປີ ກ່ຽວກັບການສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ ແລະ ການໃຫ້ສິດແກ່ຜູ້ຍິງ

- ປະສົບການໃນການຈັດຕັ້ງປະຕິບັດໂຄງການ, ການຝຶກອົບຮົມ ແລະ ການສ້າງທີມງານປຸກລະດົມຊຸມຊົນ
- ປະສົບການໃນການຈັດຝຶກອົບຮົມ ແລະ ກອງປະຊຸມ
- ມີຄວາມຮູ້ໃນການວາງແຜນໂຄງການໂດຍການນຳໃຊ້ວິທີການຂັບເຄື່ອນໂດຍຊຸມຊົນ, ການກຳນົດບູລິມະສິດຂອງໂຄງການ, ການວິເຄາະ ແລະ ການວາງແຜນວຽກຢ່າງມີເຫດຜົນ
- ປະສົບການໃນວຽກງານເຊື່ອມບົດບາດຍິງຊາຍ ແລະ ການກຳນົດກຸ່ມ (ກຸ່ມທ້ອນເງິນ, ກຸ່ມຜະລິດຕະພັນຫັດຖະກຳ, ແລະ ກຸ່ມສ້າງລາຍຮັບດ້ານອື່ນໆ ໃນເຂດຊົນນະບົດຫ່າງໄກສອກຫລີກ ທີ່ມີກຸ່ມຊົນເຜົ່າທີ່ແຕກຕ່າງກັນ).
- ປະສົບການ ແລະ ຄວາມຮູ້ ກ່ຽວກັບຂັ້ນຕອນພັດທະນາການຕະຫລາດໃນການສ້າງເຄືອຂ່າຍຂອງການຈຳໜ່າຍຜະລິດຕະພັນ
- ມີປະສົບການໃນການເຮັດວຽກຢູ່ເຂດຫ່າງໄກສອກຫລີກ, ເຂດທຸລະກັນດານເຊິ່ງມີຄວາມແຕກຕ່າງທາງດ້ານຊົນເຜົ່າ, ເພື່ອຊ່ວຍໃນການຈັດຝຶກອົບຮົມໃຫ້ແກ່ພະນັກງານຂັ້ນທ້ອງຖິ່ນ
- ສາມາດນຳໃຊ້ຄອມພິວເຕີໃນລະດັບປານກາງ (Ms Word, Excel,);
- ເຄີຍອາໄສຢູ່ໃນເຂດຊົນນະບົດທຸກຍາກໃນເຂດຫ່າງໄກສອກຫລີກຂອງ ແຂວງ ຫົວພັນ ແລະ ສະຫວັນນະເຂດຈະໄດ້ຮັບການພິຈາລະນາເປັນພິເສດ.